ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ເລກທີ 393 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 02 ກໍລະກົດ 2020

# ຂໍ້ຕົກລົງ
# ວ່າດ້ວຍທຸລະກິດແລກປ່ຽນເງິນຕາ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມນະໂຍບາຍເງິນຕາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຂໍອະນຸຍາດ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ ແລະ ການກວດກາ ທຸລະກິດແລກປ່ຽນເງິນຕາ ເພື່ອໃຫ້ທຸລະກິດແລກປ່ຽນເງິນຕາ ມີຄວາມໝັ້ນຄົງ, ປອດໄພ, ໜ້າເຊື່ອຖື ແລະ ມີປະສິດທິພາບ ແນໃສ່ເຮັດໃຫ້ການເຄື່ອນໄຫວທຸລະກິດແລກປ່ຽນເງິນຕາຖືກຕ້ອງຕາມກົດໝາຍ, ປະກອບສ່ວນເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ມີປະສິດທິຜົນ.

### ມາດຕາ 2 ທຸລະກິດແລກປ່ຽນເງິນຕາ

ທຸລະກິດແລກປ່ຽນເງິນຕາ ແມ່ນການເຄື່ອນໄຫວກ່ຽວກັບທຸລະກຳການ ຊື້-ຂາຍ ເງິນຕາ ຂອງຮ້ານແລກປ່ຽນເງິນຕາທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກທະນາຄານແຫ່ງ ສປປ ລາວ.

ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເງິນຕາ ໝາຍເຖິງ ເງິນກີບ ແລະ ເງິນຕາຕ່າງປະເທດ;

2. ເງິນສົດ ໝາຍເຖິງ ທະນະບັດ, ເງິນຫຼຽນ ແລະ ແຊັກເດີນທາງ;

3. ຜູ້ດໍາເນີນທຸລະກິດແລກປ່ຽນເງິນຕາ ໝາຍເຖິງ ຫົວໜ່ວຍວິສາຫະກິດທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ດໍາເນີນທຸລະກິດ ກ່ຽວກັບທຸລະກໍາການ ຊື້-ຂາຍ ເງິນຕາ;

4. ການດໍາເນີນທຸລະກໍາຊື້ເງິນຕາແຕ່ດ້ານດຽວ ໝາຍເຖິງ ຮ້ານແລກປ່ຽນເງິນຕາທີ່ດໍາເນີນທຸລະກໍາຊື້ເງິນຕາຕ່າງປະເທດຈາກມວນຊົນ ໂດຍບໍ່ມີການສະໜອງເງິນຕາຕ່າງປະເທດ;

5. ການດໍາເນີນທຸລະກໍາຂາຍເງິນຕາແຕ່ດ້ານດຽວ ໝາຍເຖິງ ຮ້ານແລກປ່ຽນເງິນຕາທີ່ດໍາເນີນທຸລະກໍາຂາຍເງິນຕາຕ່າງປະເທດໃຫ້ແກ່ມວນຊົນ ໂດຍບໍ່ມີການເກັບຊື້ເງິນຕາ.

ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວຂ້ອງກັບການດໍາເນີນທຸລະກິດແລກປ່ຽນເງິນຕາຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາ

ມາດຕາ 5 ການຂໍອະນຸຍາດດໍາເນີນທຸລະກິດ

ຜູ້ທີ່ມີຈຸດປະສົງດໍາເນີນທຸລະກິດແລກປ່ຽນເງິນຕາ ຕ້ອງໄດ້ຮັບການຂຶ້ນທະບຽນວິສາຫະກິດນໍາຂະແໜງອຸດສາຫະກໍາ ແລະ ການຄ້າ, ແລ້ວປະກອບເອກະສານຂໍອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາ ນໍາທະນາຄານແຫ່ງ ສປປ ລາວ.

ມາດຕາ 6 ເງື່ອນໄຂການຂໍອະນຸຍາດດໍາເນີນທຸລະກິດ

ຜູ້ທີ່ມີຈຸດປະສົງດໍາເນີນທຸລະກິດແລກປ່ຽນເງິນຕາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນທີ່ຖືສັນຊາດລາວ ຫຼື ເປັນນິຕິບຸກຄົນ ທີ່ດໍາເນີນທຸລະກິດທີ່ຕິດພັນ ເປັນຕົ້ນ ທຸລະກິດການໂຮງແຮມ ແລະ ທ່ອງທ່ຽວ;

2. ດໍາເນີນທຸລະກິດມີຜົນກໍາໄລ ຢ່າງຕໍ່ເນື່ອງໃນໄລຍະ ສາມ ປີຜ່ານມາ (ສໍາລັບນິຕິບຸກຄົນ);

3. ມີທຶນຈົດທະບຽນຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

4. ມີປະຫວັດການເຄື່ອນໄຫວຢູ່ ສປປ ລາວ ຢ່າງຈະແຈ້ງ, ບໍ່ມີສ່ວນກ່ຽວຂ້ອງກັບບຸກຄົນ ຫຼື ຜູ້ຕ້ອງສົງໄສໃນສະຖານການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

5. ບໍ່ເຄີຍຖືກສານຕັດສິນລົງໂທດ, ກຳລັງຖືກດຳເນີນຄະດີ ຫຼື ມີສ່ວນພົວພັນ ໃນສະຖານການກະທຳຜິດໃດໜຶ່ງທີ່ກ່ຽວຂ້ອງກັບ ການສໍ້ໂກງ, ການຍັກຍອກຊັບ ແລະ ການຟອກເງິນ;

6. ບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາມາກ່ອນ ຍົກເວັ້ນກໍລະນີຂໍຍຸບເລີກດ້ວຍຄວາມສະໝັກໃຈ;

7. ມີສະຖານທີ່ຕັ້ງທີ່ເໝາະສົມ ແລະ ຮັບປະກັນຄວາມປອດໄພໃນການບໍລິການແລກປ່ຽນເງິນຕາ;

8. ມີແຜນປະກອບອຸປະກອນຮັບໃຊ້ ແລະ ນຳໃຊ້ລະບົບທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ເຊັ່ນ: ລະບົບລາຍງານການ ຊື້-ຂາຍ ເງິນຕາ, ຄອມພິວເຕີ, ອິນເຕີເນັດ ແລະ ກ້ອງວົງຈອນປິດ, ໂທລະສານ, ເຄື່ອງສຳເນົາເອກະສານ, ເຄື່ອງກວດເງິນ, ເຄື່ອງນັບເງິນ, ເຄື່ອງຄິດໄລ່, ກະດານແຈ້ງອັດຕາແລກປ່ຽນ ແລະ ອຸປະກອນຮັບໃຊ້ອື່ນທີ່ຈຳເປັນ.

## ມາດຕາ 7 ເອກະສານປະກອບ

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ຊີວະປະຫວັດຫຍໍ້ຂອງຜູ້ສະເໜີຂໍອະນຸຍາດ;
3. ໃບຢັ້ງຢືນທີ່ຢູ່;
4. ສຳເນົາບັດປະຈຳຕົວ, ສຳມະໂນຄົວ ຫຼື ໜັງສືຜ່ານແດນ ຂອງຜູ້ສະເໜີຂໍອະນຸຍາດ;
5. ໃບແຈ້ງໂທດ (ອາຍຸບໍ່ເກີນ ເກົ້າສິບ ວັນ);
6. ແຜນການດຳເນີນທຸລະກິດ;
7. ໃບຢັ້ງຢືນຖານະການເງິນ ແລະ ໃບລາຍງານບັນຊີສຳຮອງຢູ່ທະນາຄານທຸລະກິດທີ່ມີການເຄື່ອນໄຫວເກົ້າສິບ ວັນຍ້ອນຫຼັງ;
8. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ (ສຳລັບນິຕິບຸກຄົນ);
9. ໜັງສືແນະນຳ ຫຼື ໜັງສືແຈ້ງເຈດຈຳນົງ ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ (ສະບັບກາແດງ);
10. ສຳເນົາໃບຢັ້ງຢືນການມອບພັນທະອາກອນປີຫຼ້າສຸດ (ສຳລັບນິຕິບຸກຄົນ);
11. ແຜນປະກອບພະນັກງານ;
12. ແຜນປະກອບອຸປະກອນ ແລະ ເຄື່ອງມືຮັບໃຊ້;
13. ໃບຢັ້ງຢືນທີ່ຕັ້ງຮ້ານ ແລະ ແຜນວາດທີ່ຕັ້ງ ທີ່ໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ (ກໍລະນີຫາກເປັນການເຊົ່າສະຖານທີ່ ຕ້ອງຄັດຕິດສຳເນົາສັນຍາເຊົ່າ);
14. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກ ນຳທະນາຄານແຫ່ງ ສປປ ລາວ (ກໍລະນີຜູ້ສະເໜີຫາກບໍ່ສາມາດມາພົວພັນດ້ວຍຕົນເອງ);
15. ຮູບຖ່າຍຂອງຜູ້ສະເໜີຂະໜາດ 3x4 ຈຳນວນ ສອງ ໃບ (ອາຍຸບໍ່ເກີນ ເກົ້າສິບ ວັນ).

ມາດຕາ 8 ການພິຈາລະນາອະນຸຍາດດຳເນີນທຸລະກິດ

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະພິຈາລະນາການຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ແລະ ແຈ້ງຕອບຜົນການພິຈາລະນາ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ຊາວ ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນເວລາພິຈາລະນາການຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ສາມາດທວງເອົາເອກະສານ ແລະ/ຫຼື ຂໍ້ມູນເພີ່ມເຕີມ ຈາກຜູ້ສະເໜີຂໍອະນຸຍາດ ໃນກໍລະນີທີ່ເຫັນວ່າຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍ.

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະປະຕິເສດການສະເໜີຂໍອະນຸຍາດ ຢ່າງເປັນລາຍລັກອັກສອນ ແລະ ນຳສົ່ງເອກະສານທັງໝົດຄືນ ໃຫ້ຜູ້ສະເໜີຂໍອະນຸຍາດ ທີ່ບໍ່ສາມາດປະຕິບັດຕາມເງື່ອນໄຂ ແລະ/ຫຼື ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ຜູ້ສະເໜີຂໍອະນຸຍາດ ທີ່ຖືກປະຕິເສດ ສາມາດຍື່ນເອກະສານປະກອບຄືນໃໝ່ ພ້ອມທັງຊີ້ແຈງເຫດຜົນໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ເພື່ອພິຈາລະນາຄືນບົນພື້ນຖານ ເງື່ອນໄຂ ແລະ ການປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 9 ການຕໍ່ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ

ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ມີອາຍຸການນຳໃຊ້ ນັບແຕ່ ເດືອນ ມັງກອນ ເຖິງ ເດືອນ ທັນວາ ຂອງທຸກໆປີ.

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງສະເໜີຂໍສືບຕໍ່ດຳເນີນທຸລະກິດດັ່ງກ່າວ ນຳກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ພາຍໃນເວລາ ສາມສິບ ວັນ ກ່ອນໃບອະນຸຍາດໝົດອາຍຸການນຳໃຊ້ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍສືບຕໍ່ດຳເນີນທຸລະກິດແລກປ່ຽນເງິນຕາ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ປະຈຳປີ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປີຜ່ານມາ;
5. ເອກະສານລາຍງານການເງິນ ຫຼື ບົດສະຫຼຸບບັນຊີ ປະຈຳປີ;
6. ໃບລາຍງານບັນຊີສຳຮອງຂອງຮ້ານແລກປ່ຽນເງິນຕາ ທີ່ມີການເຄື່ອນໄຫວໄລຍະ ໜຶ່ງ ປີ ຍ້ອນຫຼັງ (ທຸກສະກຸນເງິນ ທີ່ນຳໃຊ້ໃນການດຳເນີນທຸລະກິດແລກປ່ຽນເງິນຕາ);
7. ສຳເນົາສັນຍາການນຳໃຊ້ລະບົບລາຍງານການ ຊື້-ຂາຍ ເງິນຕາ ປະຈຳປີ ກັບພາກສ່ວນກ່ຽວຂ້ອງ;
8. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກ ນຳທະນາຄານແຫ່ງ ສປປ ລາວ (ກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
9. ຮູບຖ່າຍຂອງຜູ້ສະເໜີຂະໜາດ 3x4 ຈຳນວນ ສອງ ໃບ (ອາຍຸບໍ່ເກີນ ເກົ້າສິບ ວັນ).

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະພິຈາລະນາ ແລະ ແຈ້ງຕອບ ຜົນການສະເໜີຂໍສືບຕໍ່ດຳເນີນທຸລະກິດແລກປ່ຽນເງິນຕາ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ສິບຫ້າ ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

**ມາດຕາ 10 ທຶນຈົດທະບຽນ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງປະກອບທຶນຈົດທະບຽນຢ່າງໜ້ອຍ ໜຶ່ງຕື້ (1.000.000.000) ກີບ. ທຶນທີ່ປະກອບເປັນທຶນຈົດທະບຽນ ແມ່ນເປັນທຶນໝູນວຽນເທົ່ານັ້ນ ຊຶ່ງທຶນດັ່ງກ່າວຕ້ອງເປັນທຶນຂອງຜູ້ກ່ຽວທີ່ໄດ້ມາໂດຍຖືກຕ້ອງຕາມກົດໝາຍ ແລະ ຕ້ອງຝາກໄວ້ນຳທະນາຄານທຸລະກິດຢູ່ ສປປ ລາວ.

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ສາມາດນຳໃຊ້ທຶນຈົດທະບຽນ ເພື່ອດຳເນີນທຸລະກິດແລກປ່ຽນເງິນຕາຂອງຕົນ ນັບແຕ່ວັນທີ່ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ອອກໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

**ມາດຕາ 11 ຄ່າທຳນຽມ ແລະ ບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນການດຳເນີນທຸລະກິດແລກປ່ຽນເງິນຕາ ມີດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຈຳນວນ ໜຶ່ງແສນ (100.000) ກີບ ຕໍ່ຊຸດ;
2. ຄ່າທຳນຽມອອກໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຈຳນວນ ສູນຈຸດສູນຫ້າ ສ່ວນຮ້ອຍ (0,05%) ຂອງທຶນຈົດທະບຽນທັງໝົດ ແຕ່ສູງສຸດບໍ່ເກີນ ສາມລ້ານ (3.000.000) ກີບ;
3. ຄ່າຕໍ່ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ປະຈຳປີ ຈຳນວນ ຫ້າແສນ (500.000) ກີບ;
4. ຄ່າປ່ຽນແປງທຶນຈົດທະບຽນ ແລະ ຄ່າຍົກຍ້າຍສະຖານທີ່ຕັ້ງ ຈຳນວນ ສາມແສນ (300.000) ກີບ ຕໍ່ຄັ້ງ.

## ໝວດທີ 3
## ການເຄື່ອນໄຫວທຸລະກິດແລກປ່ຽນເງິນຕາ

**ມາດຕາ 12 ການດຳເນີນທຸລະກິດແລກປ່ຽນເງິນຕາ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ສາມາດ ຊື້-ຂາຍ ເງິນຕາທັງໝົດກັບມວນຊົນ ໃນວົງເງິນບໍ່ເກີນທຶນຈົດທະບຽນຂອງຕົນ ຕໍ່ວັນ ໂດຍຕ້ອງປະຕິບັດຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ. ການ ຊື້-ຂາຍ ເງິນຕາ ທຸກຄັ້ງ ຕ້ອງສຳເນົາບັດປະຈຳຕົວ (ສຳລັບຄົນລາວ) ຫຼື ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງລູກຄ້າໄວ້ເປັນຫຼັກຖານ. ພ້ອມນີ້, ການ ຊື້-ຂາຍ ເງິນຕາ ທຸກຄັ້ງ ຮ້ານແລກປ່ຽນເງິນຕາ ຕ້ອງໃຊ້ດຸນພິນິດໃນການພິຈາລະນາການດຳເນີນທຸລະກຳບົນພື້ນຖານການຮູ້ຈັກລູກຄ້າຂອງຕົນ.

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງມີໃບບິນ ຊື້-ຂາຍ ໃຫ້ລູກຄ້າຈຳນວນ ໜຶ່ງ ໃບ ແລະ ເກັບຮັກສາໄວ້ຈຳນວນ ໜຶ່ງ ໃບ. ໃບບິນດັ່ງກ່າວ ຕ້ອງລະບຸຂໍ້ມູນພື້ນຖານຂອງຕົນ ເປັນຕົ້ນ ຊື່ຮ້ານ, ທີ່ຢູ່ ແລະ ເບີໂທຕິດຕໍ່ ພ້ອມ

ທັງ ລະບຸຂໍ້ມູນພື້ນຖານຂອງລູກຄ້າ ເຊັ່ນ: ຊື່, ທີ່ຢູ່ ແລະ ເລກບັດປະຈຳຕົວ ຫຼື ໜັງສືຜ່ານແດນ, ອັດຕາແລກປ່ຽນ, ສະກຸນເງິນ, ຈຳນວນເງິນ ແລະ ປະເພດໃບເງິນ ຢ່າງລະອຽດຈະແຈ້ງ. ຮ້ານແລກປ່ຽນເງິນຕາ ສາມາດກຳນົດຮູບແບບໃບບິນ ຊື້-ຂາຍ ເງິນຕາຂອງຕົນ ໂດຍຜ່ານການຮັບຮອງຈາກ ທະນາຄານແຫ່ງ ສປປ ລາວ ແລະ ຕ້ອງໄດ້ຮັບການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 13 ການກຳນົດ, ຕິດປະກາດ ແລະ ປະຕິບັດອັດຕາແລກປ່ຽນ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ສາມາດກຳນົດອັດຕາແລກປ່ຽນ ໃນການ ຊື້-ຂາຍ ເງິນຕາ ລະຫວ່າງສະກຸນເງິນກີບກັບສະກຸນເງິນຕາຕ່າງປະເທດ ຂອງຕົນໄດ້ໃນຂອບເຂດ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ.

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງຕິດປະກາດອັດຕາແລກປ່ຽນ ສະເພາະສະກຸນເງິນກີບ ທຽບກັບສະກຸນເງິນຕາຕ່າງປະເທດ ທີ່ມີການ ຊື້-ຂາຍ ເງິນຕາ ກັບລູກຄ້າຂອງຕົນ.

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງປະຕິບັດການແລກປ່ຽນເງິນຕາກັບລູກຄ້າແຕ່ລະຄັ້ງ ຕາມອັດຕາແລກປ່ຽນທີ່ຕົນກຳນົດອອກຢ່າງຖືກຕ້ອງ ແລະ ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນວັກທີ ໜຶ່ງ ຂອງມາດຕານີ້ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ຊຶ່ງການ ຊື້-ຂາຍ ເງິນຕາ ລະຫວ່າງສະກຸນເງິນຕາຕ່າງປະເທດດ້ວຍກັນ ແຕ່ລະຄັ້ງ ຕ້ອງຜ່ານສະກຸນເງິນກີບ ໂດຍການກຳນົດອັດຕາໄຂວ່ (ໂດລາ/ບາດ, ບາດ/ໂດລາ) ຕ້ອງໄດ້ມາຈາກການຫານໄຂວ່ຜ່ານສະກຸນເງິນກີບ/ໂດລາ, ກີບ/ບາດ ແລະ ສະກຸນອື່ນກໍເຊັ່ນດຽວກັນ ໂດຍຕ້ອງຢູ່ໃນຂອບການກຳນົດອັດຕາແລກປ່ຽນທີ່ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້.

### ມາດຕາ 14 ການປ່ຽນແປງທຶນຈົດທະບຽນ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ມີຈຸດປະສົງປ່ຽນແປງທຶນຈົດທະບຽນ ຕ້ອງໄດ້ຮັບອະນຸຍາດຈາກ ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍປ່ຽນແປງທຶນຈົດທະບຽນ (ພິມດ້ວຍຕົນເອງ);
2. ສຳເນົາໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ປະຈຳປີ;
3. ໃບລາຍງານບັນຊີສຳຮອງຂອງຮ້ານແລກປ່ຽນເງິນຕາ ທີ່ມີການເຄື່ອນໄຫວໄລຍະ ໜຶ່ງ ປີ ຍ້ອນຫຼັງ (ທຸກສະກຸນເງິນ ທີ່ນຳໃຊ້ໃນການດຳເນີນທຸລະກິດແລກປ່ຽນເງິນຕາ);
4. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
5. ຮູບຖ່າຍຂອງຜູ້ສະເໜີຂະໜາດ 3x4 ຈຳນວນ ສອງ ໃບ (ອາຍຸບໍ່ເກີນ ເກົ້າສິບ ວັນ).

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະພິຈາລະນາ ແລະ ແຈ້ງຕອບຜົນ"ການສະເໜີຂໍປ່ຽນແປງທຶນຈົດທະບຽນ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ສິບ ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

### ມາດຕາ 15 ການຍົກຍ້າຍສະຖານທີ່ຕັ້ງ ຂອງຮ້ານແລກປ່ຽນເງິນຕາ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ມີຈຸດປະສົງຍົກຍ້າຍສະຖານທີ່ຕັ້ງຂອງຮ້ານ ຕ້ອງຂໍອະນຸຍາດນຳກົມນະໂຍບາຍເງິນຕາ ຫຼື ສາຂາຈາກທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ລ່ວງໜ້າ ສາມສິບ ວັນ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຍົກຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາ (ພິມດ້ວຍຕົນເອງ);
2. ສຳເນົາໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ປະຈຳປີ;
3. ໃບຢັ້ງຢືນທີ່ຕັ້ງ ແລະ ແຜນວາດທີ່ຕັ້ງຮ້ານໃໝ່ ທີ່ໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ (ກໍລະນີເປັນການເຊົ່າສະຖານທີ່ຕ້ອງຄັດຕິດສັນຍາເຊົ່າ);
4. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກ ນຳທະນາຄານແຫ່ງ ສປປ ລາວ (ກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
5. ຮູບຖ່າຍຂອງຜູ້ສະເໜີຂະໜາດ 3x4 ຈຳນວນ ສອງ ໃບ (ອາຍຸບໍ່ເກີນ ເກົ້າສິບ ວັນ).

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະຄົ້ນຄວ້າພິຈາລະນາ ແລະແຈ້ງຕອບການຂໍຍົກຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ສິບ ວັນນັບແຕ່ວັນທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ

### ມາດຕາ 16 ສິດຂອງຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີສິດ ດັ່ງນີ້:

1. ກຳນົດອັດຕາແລກປ່ຽນ ໃນການ ຊື້-ຂາຍ ເງິນຕາ ແຕ່ລະສະກຸນເງິນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ;
2. ຊື້-ຂາຍ ເງິນຕາກັບມວນຊົນ ແລະ ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ໄດ້ທັງເງິນສົດ ແລະເງິນໂອນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ;
3. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 17 ໜ້າທີ່ຂອງຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີໜ້າທີ່ ດັ່ງນີ້:

1. ຕິດປ້າຍຊື່ຮ້ານແລກປ່ຽນເງິນຕາ ຕາມລະບຽບການທີ່ກ່ຽວຂ້ອງ;
2. ຕິດໃບອະນຸຍາດດຳເນີນທຸລະກິດ ໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ;

3. ບັນທຶກການ ຊື້-ຂາຍ ເງິນຕາ ປະຈຳວັນ ໂດຍລະບຸຂໍ້ມູນລະອຽດຕາມໃບບິນ ຊື້-ຂາຍ ເງິນຕາ ແຕ່ລະສະກຸນເງິນ ຢ່າງຖືກຕ້ອງ;

4. ເປີດບັນຊີເງິນຝາກ ເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຂອງຮ້ານແລກປ່ຽນເງິນຕາ ໂດຍສອດຄ່ອງກັບຊື່ທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ເພື່ອນຳໃຊ້ສະເພາະການດຳເນີນທຸລະກິດແລກປ່ຽນເງິນຕາ ແລະ ຕ້ອງດຳເນີນການເຄື່ອນໄຫວທາງດ້ານການເງິນຂອງຮ້ານແລກປ່ຽນເງິນຕາ ຜ່ານບັນຊີດັ່ງກ່າວເທົ່ານັ້ນ;

5. ສ້າງລະບົບບັນຊີສະເພາະ ເພື່ອຮັບໃຊ້ການດຳເນີນທຸລະກິດແລກປ່ຽນເງິນຕາ ແລະ ສະຫຼຸບບັນຊີປະຈຳປີ ໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ;

6. ມອບພັນທະອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ຮັບຜິດຊອບຄ່າຕິດຕັ້ງ ແລະ ຄ່ານຳໃຊ້ລະບົບສັນຍານອິນເຕີເນັດ ປະຈຳປີ ຕາມພາກສ່ວນກ່ຽວຂ້ອງ ກຳນົດໃນແຕ່ລະໄລຍະ;

8. ລາຍງານການກວດພົບເງິນປອມ ຫຼື ເງິນທີ່ສົງໄສວ່າ ແມ່ນເງິນປອມໃຫ້ ແກ່ເຈົ້າໜ້າທີ່ກ່ຽວຂ້ອງພ້ອມທັງຮັກສາເງິນປອມນັ້ນໄວ້ເພື່ອເປັນຫຼັກຖານໃນການດຳເນີນຄະດີ;

9. ປະຕິບັດວຽກງານ ຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການບັນຊີ ແລະ ການລາຍງານ

### ມາດຕາ 18 ການບັນຊີ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງຖືບັນຊີຕິດຕາມການດຳເນີນທຸລະກິດແລກປ່ຽນເງິນຕາ ແລະ ບັນຊີລາຍຮັບ-ລາຍຈ່າຍທຸລະກິດ ຕາມຫຼັກການບັນຊີ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 19 ການລາຍງານ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງລາຍງານການດຳເນີນທຸລະກິດຂອງຕົນ ໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຜ່ານລະບົບລາຍງານແບບເອເລັກໂຕຼນິກ ຂອງທະນາຄານແຫ່ງ ສປປ ລາວ ຫຼື ຜ່ານແຟັກ ຫຼື ອີເມວ ຄື:

1. ລາຍງານການກຳນົດອັດຕາແລກປ່ຽນແຕ່ລະສະກຸນເງິນ ພາຍໃນເວລາ 08:15-15:00 ໂມງ ຂອງແຕ່ລະວັນ ແລະ ຕ້ອງລາຍງານທັນທີ ທີ່ມີການປັບປ່ຽນອັດຕາແລກປ່ຽນໃໝ່ ທຸກຄັ້ງ;

2. ລາຍງານການຊື້-ຂາຍເງິນຕາ ທັນທີທີ່ມີການ ຊື້-ຂາຍ ທຸກຄັ້ງ.

## ໝວດທີ 6
## ການໂຈະຊົ່ວຄາວ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດ

### ມາດຕາ 20 ການໂຈະຊົ່ວຄາວ

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະແຈ້ງໂຈະການດຳເນີນທຸລະກິດຊົ່ວຄາວ ຢ່າງເປັນລາຍລັກອັກສອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ສະເໜີຂໍໂຈະດ້ວຍຄວາມສະໝັກໃຈ ຊຶ່ງສາມາດໂຈະການດຳເນີນທຸລະກິດຊົ່ວຄາວ ບໍ່ເກີນ ເກົ້າສິບ ວັນ ໂດຍຕ້ອງລາຍງານສະພາບ ແລະ ເຫດຜົນ ເພື່ອຢັ້ງຢືນຄວາມຈຳເປັນໃນການໂຈະ ແລະ ຖ້າເກີນກຳນົດເວລາດັ່ງກ່າວ ຫາກບໍ່ເປີດບໍລິການຄືນ ຫຼື ບໍ່ແຈ້ງຕໍ່ ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະຖືກປັບໃໝ ຫຼື ຖືກຖອນໃບອະນຸຍາດດຳເນີນທຸລະກິດ;

2. ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີສ່ວນພົວພັນກັບການລະເມີດກົດໝາຍ ແລະ ລະບຽບການຂອງ ສປປ ລາວ ຊຶ່ງຜູ້ກ່ຽວຕ້ອງລາຍງານສະພາບ ແລະ ຊີ້ແຈງບັນຫາທີ່ເກີດຂຶ້ນ ໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ.

### ມາດຕາ 21 ການຖອນໃບອະນຸຍາດດຳເນີນທຸລະກິດ

ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ສາມາດຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ດຳເນີນທຸລະກິດ ຂໍຍຸບເລີກດ້ວຍຄວາມສະໝັກໃຈ;
2. ບໍ່ດຳເນີນທຸລະກິດແລກປ່ຽນເງິນຕາ ເປັນເວລາ ເກົ້າສິບ ວັນ ຕິດຕໍ່ກັນ ໂດຍບໍ່ມີເຫດຜົນ ຫຼື ບໍ່ມີການແຈ້ງຕໍ່ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຢ່າງເປັນລາຍລັກອັກສອນ;
3. ນຳໃຊ້ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ໝົດອາຍຸ;
4. ແລກປ່ຽນເງິນຕາໂດຍກົງກັບທະນາຄານທຸລະກິດ, ບຸກຄົນ ຫຼື ນິຕິບຸກຄົນ ຢູ່ຕ່າງປະເທດ;
5. ບໍ່ສາມາດປະຕິບັດຕາມເງື່ອນໄຂ ໃນການສືບຕໍ່ດຳເນີນທຸລະກິດແລກປ່ຽນເງິນຕາ;
6. ຖືກປະຕິບັດມາດຕະການປັບໃໝ ສອງ ຄັ້ງ ຕິດຕໍ່ກັນ;
7. ລະເມີດກົດໝາຍ ຫຼື ລະບຽບການອື່ນ ຢ່າງຮ້າຍແຮງ.

## ໝວດທີ 7
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 22 ຂໍ້ຫ້າມ

ຫ້າມຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການແລກປ່ຽນເງິນຕານອກສະຖານທີ່ ທີ່ໄດ້ຮັບອະນຸຍາດ ຫຼື ໃຫ້ບໍລິການດ້ານອື່ນນອກຈາກທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

2. ແລກປ່ຽນເງິນຕາໂດຍກົງກັບທະນາຄານທຸລະກິດ, ບຸກຄົນ ຫຼື ນິຕິບຸກຄົນ ຢູ່ຕ່າງປະເທດ;

3. ກຳນົດ, ຕິດປະກາດ, ປະຕິບັດ ແລະ ດຳເນີນການຊື້-ຂາຍເງິນຕາ ດ້ວຍອັດຕາແລກປ່ຽນ ທີ່ບໍ່ຖືກຕ້ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ;

4. ຊື້-ຂາຍ ເງິນຕາ ບໍ່ຖືກຕ້ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ;

5. ຊື້-ຂາຍ ເງິນຕາທັງໝົດກັບມອບຊຶນ ໃນຈຳນວນທີ່ເກີນທຶນຈົດທະບຽນຂອງຕົນ ຕໍ່ວັນ;

6. ເປີດບັນຊີເງິນຝາກຢູ່ຕ່າງປະເທດ;

7. ນຳໃຊ້ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ໝົດອາຍຸ;

8. ດຳເນີນການ ຫຼື ມີສ່ວນພົວພັນໃນການສ້າງຄວາມເສຍຫາຍ ຕໍ່ລະບົບອັດຕາແລກປ່ຽນ;

9. ເປັນທີ່ປຶກສາ, ເປັນນາຍໜ້າໃນການ ຊື້-ຂາຍ ເງິນຕາ ຜ່ານລະບົບອອນລາຍ ຫຼື ຊື້-ຂາຍ ເງິນຕາລະຫວ່າງປະເທດ;

10. ດຳເນີນການຊື້ ຫຼື ຂາຍເງິນຕາແຕ່ດ້ານດຽວ;

11. ລາຍງານອັດຕາແລກປ່ຽນ ແລະ ການ ຊື້-ຂາຍ ເງິນຕາ ຊັກຊ້າ ໂດຍບໍ່ແຈ້ງເຫດຜົນໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ;

12. ຍົກຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ;

13. ມອບໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຕົນ ໃຫ້ບຸກຄົນອື່ນ ເພື່ອນຳໃຊ້ໃນຈຸດປະສົງໃດກໍຕາມ;

14. ນຳໃຊ້ບັນຊີສ່ວນຕົວຂອງຕົນ ຫຼື ບຸກຄົນອື່ນ ໃນການດຳເນີນທຸລະກິດແລກປ່ຽນເງິນຕາ ຫຼື ນຳໃຊ້ບັນຊີຂອງຮ້ານແລກປ່ຽນເງິນຕາ ເຄື່ອນໄຫວໃນຈຸດປະສົງທີ່ບໍ່ກ່ຽວຂ້ອງກັບການດຳເນີນທຸລະກິດແລກປ່ຽນເງິນຕາ;

15. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 23 ມາດຕະການສຶກສາອົບຮົມ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ລະເມີດຂໍ້ຕົກລົງສະບັບນີ້ເປັນຄັ້ງທຳອິດ ທີ່ມີລັກສະນະເບົາ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ ຈາກກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງເຮັດບົດບັນທຶກ ຢ່າງເປັນລາຍລັກອັກສອນ.

**ມາດຕາ 24 ມາດຕະການປັບໃໝທາງບໍລິຫານ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ໄດ້ຖືກປະຕິບັດມາດຕະການສຶກສາອົບຮົມແລ້ວ ແຕ່ຍັງສືບຕໍ່ລະເມີດຂໍ້ຕົກລົງສະບັບນີ້ ຫຼື ເປັນການກະທຳຜິດຄັ້ງທຳອິດ ທີ່ສ້າງຄວາມເສຍຫາຍຕໍ່ລະບົບອັດຕາແລກປ່ຽນ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບໍລິການແລກປ່ຽນເງິນຕານອກສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ໃຫ້ບໍລິການດ້ານອື່ນນອກຈາກທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 3.000.000 ກີບ ຕໍ່ຄັ້ງ;

2. ແລກປ່ຽນເງິນຕາໂດຍກົງກັບທະນາຄານທຸລະກິດ, ບຸກຄົນ ຫຼື ນິຕິບຸກຄົນ ຢູ່ຕ່າງປະເທດ ຈະຖືກປັບໃໝ 5.000.000 ກີບ ຕໍ່ຄັ້ງ;

3. ກຳນົດ, ຕິດປະກາດ, ປະຕິບັດ ແລະ ດຳເນີນການ ຊື້-ຂາຍ ເງິນຕາ ດ້ວຍອັດຕາແລກປ່ຽນ ທີ່ບໍ່ຖືກຕ້ອງຕາມລະບຽບການ ຂອງທະນາຄານແຫ່ງ ສປປ ລາວ ກຳນົດ ຈະຖືກປັບໃໝ 5.000.000 ກີບ ຕໍ່ຄັ້ງ;

4. ຊື້-ຂາຍ ເງິນຕາ ບໍ່ຖືກຕ້ອງຕາມລະບຽບການ ຂອງທະນາຄານແຫ່ງ ສປປ ລາວ ກຳນົດ ຈະຖືກປັບໃໝ 5.000.000 ກີບ ຕໍ່ຄັ້ງ;

5. ຊື້-ຂາຍ ເງິນຕາ ທັງໝົດກັບມອນຊົນ ໃນຈຳນວນທີ່ເກີນທຶນຈົດທະບຽນຂອງຕົນ ຕໍ່ວັນ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສ່ວນເກີນທັງໝົດ;

6. ເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 20.000.000 ກີບ;

7. ນຳໃຊ້ໃບອະນຸຍາດດຳເນີນທຸລະກິດທີ່ໝົດອາຍຸ ຈະຖືກປັບໃໝ 5.000.000 ກີບ ຕໍ່ເດືອນ;

8. ດຳເນີນການ ຫຼື ມີສ່ວນພົວພັນ ໃນການສ້າງຄວາມເສຍຫາຍຕໍ່ລະບົບອັດຕາແລກປ່ຽນ ຈະຖືກປັບໃໝ 30.000.000 ກີບ ຕໍ່ຄັ້ງ;

9. ເປັນທີ່ປຶກສາ, ເປັນນາຍໜ້າໃນການ ຊື້-ຂາຍ ເງິນຕາ ຜ່ານລະບົບອອນລາຍ ຫຼື ຊື້-ຂາຍ ເງິນຕາລະຫວ່າງປະເທດ ຈະຖືກປັບໃໝ 10.000.000 ກີບ ຕໍ່ຄັ້ງ;

10. ດຳເນີນການ ຊື້ ຫຼື ຂາຍເງິນຕາແຕ່ດ້ານດຽວ ຈະຖືກປັບໃໝ 1.000.000 ກີບ ຕໍ່ຄັ້ງ;

11. ລາຍງານອັດຕາແລກປ່ຽນ ແລະ ການ ຊື້-ຂາຍ ເງິນຕາ ຊັກຊ້າ ໂດຍບໍ່ແຈ້ງເຫດຜົນໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະຖືກປັບໃໝ 100.000 ກີບ ຕໍ່ວັນ;

12. ຍົກຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5.000.000 ກີບ ຕໍ່ຄັ້ງ;

13. ມອບໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຕົນ ໃຫ້ບຸກຄົນອື່ນ ເພື່ອນຳໃຊ້ໃນຈຸດປະສົງໃດກໍຕາມ ຈະຖືກປັບໃໝ 20.000.000 ກີບ ຕໍ່ຄັ້ງ;

14. ນຳໃຊ້ບັນຊີສ່ວນຕົວຂອງຕົນ ຫຼື ບຸກຄົນອື່ນ ໃນການດຳເນີນທຸລະກິດແລກປ່ຽນເງິນຕາ ຫຼື ນຳໃຊ້ບັນຊີຂອງຮ້ານແລກປ່ຽນເງິນຕາ ເຄື່ອນໄຫວໃນຈຸດປະສົງທີ່ບໍ່ກ່ຽວຂ້ອງກັບການດຳເນີນທຸລະກິດແລກປ່ຽນເງິນຕາ ຈະຖືກປັບໃໝ 5.000.000 ກີບ ຕໍ່ຄັ້ງ.

ຖ້າມີການລະເມີດຊ້ຳໃນກໍລະນີເກົ່າ ຈະຖືກປັບໃໝ ສອງ ເທົ່າ ຂອງມູນຄ່າປັບໃໝຄັ້ງຫຼ້າສຸດ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາ ແລະ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ຜູ້ດໍາເນີນທຸລະກິດແລກປ່ຽນເງິນຕາ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການເຄື່ອນໄຫວທຸລະກິດແລກປ່ຽນເງິນຕາ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການດໍາເນີນທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 529/ທຫລ, ລົງວັນທີ 01 ກໍລະກົດ 2016.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ